ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 1071 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 5-10-2020

ກະຊວງອຸດສາຫະກຳແລະການຄ້າ
ເລກທີ 1953
ວັນທີ 05/10/20

# ແຈ້ງການ

**ຮຽນ:** - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ທີ່ເຄົາລົບ.

- ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ ທີ່ເຄົາລົບ.
- ທ່ານ ລັດຖະມົນຕີ ກະຊວງການຕ່າງປະເທດ.
- ທ່ານ ລັດຖະມົນຕີ ກະຊວງສາທາລະນະສຸກ.
- ທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່.
- ທ່ານ ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ.
- ທ່ານ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ. ✓
- ທ່ານ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ.
- ທ່ານເຈົ້າແຂວງ ແຂວງວຽງຈັນ.

**ເລື່ອງ:** ການອະນຸມັດໃຫ້ເປີດດ່ານບ້ານວັງ, ເມືອງໝື່ນ, ແຂວງວຽງຈັນ ເພື່ອຮັບໃຊ້ໃຫ້ແກ່ການສົ່ງອອກແຮ່ບາລິດ ຂອງບໍລິສັດ ເພັດທອງຄຳ ບໍ່ແຮ່ ຈຳກັດ.

- ອີງຕາມ ໜັງສືລາຍງານ ສະບັບເລກທີ 618/ຍທຂ, ລົງວັນທີ 21 ກັນຍາ 2020 ຂອງກະຊວງໂຍທາທິການ ແລະ ຂົນສົ່ງ.
- ອີງຕາມ ທິດຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 30 ກັນຍາ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້: **“** ເຫັນດີອະນຸມັດໃຫ້ເປີດດ່ານບ້ານວັງ, ເມືອງໝື່ນ, ແຂວງວຽງຈັນ ເພື່ອຮັບໃຊ້ໃຫ້ແກ່ການສົ່ງອອກແຮ່ບາລິດ ຂອງບໍລິສັດ ເພັດທອງຄຳ ບໍ່ແຮ່ ຈຳກັດ ແຕ່ຕ້ອງໄດ້ມີການຄຸ້ມຄອງຕິດຕາມການສົ່ງອອກໃຫ້ຮັດກຸມ ແລະ ຕ້ອງຮັບປະກັນບໍ່ໃຫ້ມີຊ່ອງວ່າງສວຍໂອກາດຢ່າງເດັດຂາດ. ພ້ອມນັ້ນ, ຕ້ອງປະຕິບັດຕາມມາດຕະການສະກັດກັ້ນ ແລະ ປ້ອງກັນພະຍາດໂຄວິດ-19 ທີ່ລັດຖະບານວາງອອກຢ່າງເຂັ້ມງວດ **”**.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ

ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | |
|---|---|
| - ທ່ານ ນາຍົກ-ບັນດາທ່ານ ຮອງນາຍົກລັດຖະມົນຕີ | 04 ສະບັບ. |
| - ຫ້ອງວ່າການສູນກາງພັກ | 01 ສະບັບ. |
| - ຄະນະເລຂາທິການ ສະພາແຫ່ງຊາດ | 01 ສະບັບ. |
| - ຄະນະ ຫສນຍ ທ່ານລະ | 01 ສະບັບ. |
| - ກົມກວດກາ, ຫສນຍ | 01 ສະບັບ. |
| - ກົມຄົ້ນຄວ້າ-ສັງລວມ, ຫສນຍ | 01 ສະບັບ. |
| - ສຳເນົາ | 01 ສະບັບ. |